NSW Health

NSW GOVERNMENT

# ໂຣກຫັດ

ເຈ້ຍຂໍ້ມູນຂໍ້ເທັດຈິງ

**Measles - Fact sheet** Lao

### ຂໍ້ເທັດຈິງສຳຄັນ

- ໂຣກຫັດເປັນໂຣກຕິດຕໍ່ທີ່ມີໄວຣັສທີ່ເຮັດໃຫ້ເກີດຕຸ່ມຜື່ນ ແລະ ເປັນໄຂ້.
- ໂຣກຫັດສາມາດເຮັດໃຫ້ເກີດອາການແຊກຊ້ອນຮ້າຍແຮງ ເຊັ່ນ ປອດອັກເສບ ແລະ ສະໝອງອັກເສບ ແລະ ອາດຕ້ອງເຂົ້າຮັບການຮັກສາຢູ່ໂຮງໝໍ.
- ການສັກວັກຊີນແມ່ນວິທີທີ່ດີທີ່ສຸດເພື່ອປ້ອງກັນໂຣກ ແລະ ການແຜ່ລະບາດຂອງໂຣກຫັດ. ໂຣກຫັດແມ່ນພົບໄດ້ນ້ອຍໃນອອສເຕຣເລັຍ ເນື່ອງຈາກວ່າວັກຊີນມີປະສິດທິພາບໃນການປ້ອງກັນໂຣກ.
- ການສັກວັກຊີນປ້ອງກັນໂຣກຫັດຍັງຄົງເປັນສິ່ງສຳຄັນ ເພາະວ່າຄົນເຮົາສາມາດນຳເອົາເຊື້ອໄວຣັສກັບຄືນມາໄດ້ພາຍຫຼັງທີ່ເດີນທາງກັບມາຈາກຕ່າງປະເທດ.
- ໂຣກຫັດແມ່ນຍັງພົບໄດ້ທົ່ວໄປໃນຫຼາຍປະເທດທີ່ຊາວອອສເຕຣເລັຍໄປທ່ຽວພັກຜ່ອນ ຫຼື ໄປຢ້ຽມຢາມຄອບຄົວ ແລະ ໝູ່ເພື່ອນ.
- ຖ້າທ່ານຄິດວ່າທ່ານເປັນໂຣກຫັດ ໃຫ້ໂທຫາທ່ານໝໍລ່ວງໜ້າເພື່ອໃຫ້ທ່ານໝໍສາມາດຈຳກັດການສຳຜັດກັບຄົນອື່ນເມື່ອທ່ານມາຮອດ.

## ໂຣກຫັດແມ່ນຫຍັງ?

ໂຣກຫັດເປັນໂຣກທີ່ຕິດເຊື້ອໄວຣັສທີ່ຕິດຕໍ່ໄດ້ໄວທີ່ສຸດແລະອາດກໍ່ໃຫ້ເກີດອາການແຊກຊ້ອນຮ້າຍແຮງໄດ້. ມັນຍັງຄົງເປັນສາເຫດຂອງການເສຍຊີວິດທີ່ພົບໄດ້ເລື້ອຍໆຂອງເດັກນ້ອຍອາຍຸຕ່ຳກວ່າ 5 ປີຢູ່ໃນບາງສ່ວນຂອງໂລກ.

ໃນໄລຍະຜ່ານມາ, ການຕິດເຊື້ອໂຣກຫັດແມ່ນເປັນເລື້ອງປົກກະຕິໃນວັຍເດັກໃນອອສເຕຣເລັຍ. ຄົນສ່ວນໃຫຍ່ທີ່ເກີດກ່ອນປີ 1966 ຈະຕິດເຊື້ອໂຣກຫັດໃນວັຍເດັກ ແລະ ມີແນວໂນ້ມທີ່ຈະມີພູມຄຸ້ມກັນ.

ເນື່ອງຈາກມີການສັກຢາປ້ອງກັນໂຣກ ໃນປັດຈຸບັນໂຣກຫັດຈຶ່ງພົບໄດ້ໜ້ອຍໃນອອສເຕຣເລັຍ.

ຢ່າງໃດກໍ່ຕາມ, ໂຣກຫັດຍັງຄົງພົບໄດ້ທົ່ວໄປໃນຫຼາຍພາກສ່ວນຂອງໂລກ ແລະ ການລະບາດໃຫຍ່ຍັງສືບຕໍ່ເກີດຂຶ້ນໃນຫຼາຍປະເທດ. ຜູ້ທີ່ເດີນທາງໄປຕ່າງປະເທດ ຫຼື ເດີນທາງມາອອສເຕຣເລັຍອາດນຳເອົາໂຣກນີ້ມານຳໄດ້ ຊຶ່ງເຮັດໃຫ້ເກີດການລະບາດຂອງໂຣກຫັດຢູ່ໃນຊຸມຊົນ. ນີ້ແມ່ນເຫດຜົນທີ່ວ່າມັນເປັນສິ່ງສຳຄັນທີ່ຕ້ອງແນ່ໃຈວ່າທ່ານໄດ້ຮັບການສັກຢາປ້ອງກັນໂຣກຫັດ ເພື່ອຊ່ວຍປົກປ້ອງຕົວທ່ານເອງ ແລະຊຸມຊົນຂອງທ່ານ.

ມັນເປັນສິ່ງສຳຄັນທີ່ຈະຕ້ອງແນ່ໃຈວ່າຜູ້ທີ່ເກີດໃນລະຫວ່າງປີ 1966  ຫຼື ຫຼັງຈາກນັ້ນ ໄດ້ຮັບວັກຊີນໂຣກຫັດສອງເຂັມ.

© NSW Ministry of Health. SHPN (CDB) 250443-8. March 2026

## ອາການຂອງໂຣກຫັດມີຫຍັງແດ່?

ອາການທໍາອິດແມ່ນເປັນໄຂ້, ເມື່ອຍ, ໄອ, ນໍ້າມູກໄຫຼ, ຕາແດງແລະເຈັບ ແລະ ຮູ້ສຶກບໍ່ສະບາຍຕົວ. ສອງສາມມື້ຕໍ່ມາຈະມີຕຸ່ມຜື່ນປາກົດຂຶ້ນ. ຜື່ນຈະເລີ້ມຂຶ້ນເທິງໃບໜ້າ, ແຜ່ລາມລົງໄປເຖິງລໍາຕົວ ແລະ ເປັນຢູ່ປະມານ 4-7 ວັນ. ຜື່ນຈະບໍ່ມີອາການຄັນ. ບາງຄົນ, ໂດຍສະເພາະເດັກນ້ອຍ, ອາດຈະມີອາການຖອກທ້ອງອີກນໍາ.

ອາການຂອງໂຣກຫັດມັກຈະເລີ້ມປາກົດປະມານ 10 ມື້ຫຼັງຈາກໄດ້ສໍາຜັດກັບໄວຣັສ ແຕ່ບາງຄັ້ງອາດໃຊ້ເວລາປະມານ 7 ຫຼື ດົນເຖິງ18 ມື້ຈຶ່ງຈະປາກົດ. ປົກກະຕິແລ້ວຕຸ່ມຜື່ນຈະປາກົດຂຶ້ນປະມານ 14 ມື້ຫຼັງຈາກການສໍາຜັດກັບເຊື້ອໄວຣັສໂຣກຫັດ.

ໂຣກຫັດເປັນໂຣກຮ້າຍແຮງ. ຄົນທີ່ເປັນໂຣກຫັດຫຼາຍເຖິງ ໜຶ່ງໃນສາມ ຈະມີອາການແຊກຊ້ອນ ແລະຫຼາຍຄົນຕ້ອງເຂົ້າຮັບການຮັກສາຢູ່ໂຮງໝໍ. ອາການແຊກຊ້ອນຂອງໂຣກຫັດອາດປະກອບມີການຕິດເຊື້ອໃນຫູ, ຖອກທ້ອງ ແລະ ປອດອັກເສບ. ປະມານໜຶ່ງໃນທຸກໆ 1000 ຄົນທີ່ເປັນໂຣກຫັດຈະພັດທະນາເປັນສະໝອງອັກເສບ (ອາການບວມຂອງສະໝອງ).

## ໂຣກຫັດແຜ່ຜາຍໄດ້ແນວໃດ?

ໂຣກຫັດມັກຈະແຜ່ຜາຍໄປເມື່ອຄົນຫາຍໃຈເອົາເຊື້ອໄວຣັສໂຣກຫັດທີ່ເກີດຈາກອາການໄອ ຫຼື ຈາມຂອງຜູ້ຕິດເຊື້ອທີ່ຢູ່ໃນອາກາດ.

ໂຣກຫັດແມ່ນໜຶ່ງໃນໂຣກຕິດເຊື້ອທີ່ແຜ່ລາມໄດ້ງ່າຍທີ່ສຸດໃນບັນດາໂຣກຕິດເຊື້ອຂອງມະນຸດທັງໝົດ. ພຽງແຕ່ການຢູ່ໃນຫ້ອງດຽວກັນກັບຄົນທີ່ເປັນໂຣກຫັດກໍ່ສາມາດເຮັດໃຫ້ຕິດເຊື້ອໄດ້.

ໂດຍປົກກະຕິແລ້ວ ຄົນທີ່ເປັນໂຣກຫັດແມ່ນມັກຈະຕິດເຊື້ອຕັ້ງແຕ່ກ່ອນອາການຈະເລີ່ມຕົ້ນຈົນເຖິງສີ່ມື້ຫຼັງຈາກຜື່ນປາກົດຂຶ້ນ.

## ໃຜແດ່ທີ່ມີຄວາມສ່ຽງຕໍ່ການເປັນໂຣກຫັດ?

ຄົນທີ່ມີຄວາມສ່ຽງຕໍ່ການເປັນໂຣກຫັດຖ້າ:

- ພວກເຂົາບໍ່ເຄີຍມີການຕິດເຊື້ອໂຣກຫັດມາກ່ອນ **ຫຼື**
- ພວກເຂົາຍັງບໍ່ທັນໄດ້ສັກຢາວັກຊີນປ້ອງກັນໂຣກຫັດ 2 ເຂັມ **ຫຼື**
- ພວກເຂົາມີລະບົບພູມຄຸ້ມກັນທີ່ອ່ອນແອ (ເຊັ່ນ: ຄົນທີ່ໄດ້ຮັບການປິ່ນປົວດ້ວຍເຄມີບໍາບັດ ຫຼື ດ້ວຍລັງສີສໍາລັບໂຣກມະເຮັງ ຫຼື ຜູ້ທີ່ໃຊ້ຢາສະເຕີຣອຍໃນປະລິມານສູງ) ເຖິງແມ່ນວ່າພວກເຂົາໄດ້ຮັບການສັກຢາປ້ອງກັນຢ່າງຄົບຖ້ວນ ຫຼື ເຄີຍຕິດເຊື້ອຫັດມາກ່ອນແລ້ວກໍ່ຕາມ **ແລະ**
- ພວກເຂົາໄດ້ເຄີຍສໍາຜັດກັບຜູ້ທີ່ຕິດເຊື້ອໂຣກຫັດ.

ໂຣກຫັດຍັງພົບໄດ້ທົ່ວໄປຢູ່ໃນຫຼາຍປະເທດ ແລະ ການລະບາດໃຫຍ່ມັກຈະເກີດຂຶ້ນເລື້ອຍໆ. ຜູ້ທີ່ໄປຕ່າງປະເທດມີຄວາມສ່ຽງຕໍ່ການຕິດໂຣກຫັດ ຖ້າພວກເຂົາບໍ່ມີພູມຄຸ້ມກັນ.

## ຈະປ້ອງກັນໂຣກຫັດໄດ້ແນວໃດ?

### ການສັກຢາປ້ອງກັນ

ການປ້ອງກັນໂຣກຫັດທີ່ດີທີ່ສຸດແມ່ນການສັກວັກຊີນ. ວັກຊີນປ້ອງກັນໂຣກຫັດສອງເຂັມ (ຫ່າງກັນຢ່າງ  ໜ້ອຍ 4 ອາທິດ) ຈະໃຫ້ການປ້ອງກັນໃນໄລຍະຍາວ, ອາດຕະຫຼອດຊີວິດໃນ 99% ຂອງຜູ້ທີ່ໄດ້ຮັບວັກຊີນ.

ຜູ້ທີ່ວາງແຜນຈະໄປຕ່າງປະເທດຄວນໂອ້ລົມກັບທ່ານໝໍຄອບຄົວຂອງພວກເຂົາ ຫຼື ເພສັຊກອນກ່ຽວກັບການສັກວັກຊີນ, ກວດເບິ່ງວ່າພວກເຂົາໄດ້ຮັບການສັກວັກຊີນຄົບຖ້ວນແລ້ວ ແລະກວດສອບໃຫ້ແນ່ໃຈວ່າພວກເຂົາໄດ້ຮັບວັກຊີນປ້ອງກັນໂຣກຫັດຢ່າງຄົບຖ້ວນກ່ອນທີ່ຈະອອກຈາກອອສເຕຣເລັຍ.

ໃນປະເທດອອສເຕຣເລັຍ, ເດັກນ້ອຍຈະໄດ້ຮັບວັກຊີນປ້ອງກັນໂຣກຫັດ 2ເຂັມ ໂດຍບໍ່ຕ້ອງເສັຍຄ່າໃຊ້ຈ່າຍໃດໆພາຍໃຕ້ໂຄງການການສັກຢາປ້ອງກັນໂຣກ ແຫ່ງຊາດ (NIP) ຕອນ:

- ອາຍຸ 12 ເດືອນ ສັກວັກຊີນໂຣກຫັດ-ໂຣກ ໝາກເບີດ-ໂຣກຫັດເຢັຍຣະມັນ(ຣູແບລລາ) (MMR).
- ອາຍຸ 18 ເດືອນ ສັກວັກຊີນປ້ອງກັນໂຣກຫັດ-ໂຣກໝາກເບີດ-ໂຣກຫັດເຢັຍຣະມັນ -ໂຣກໝາກໃສ (MMRV).

ວັກຊີນເຫຼົ່ານີ້ໃຫ້ການປ້ອງກັນຈາກໂຣກໝາກເບີດ, ໂຣກຫັດເຢັຍລະມັນ(ຣູແບລລາ) ແລະ ໂຣກໝາກໃສ (ວາຣິແຊລລາ) ລວມເຖິງໂຣກຫັດອີກດ້ວຍ.

ຜູ້ທີ່ວາງແຜນຈະໄປຕ່າງປະເທດກັບເດັກນ້ອຍອາຍຸລະຫວ່າງ 6 ຫາ 18 ເດືອນຄວນປຶກສາຫາລືກ່ຽວກັບແຜນການຂອງພວກເຂົາກັບທ່ານໝໍຄອບຄົວຂອງພວກເຂົາ, ເນື່ອງຈາກວ່າເດັກນ້ອຍທີ່ເດີນທາງໄປເຂດທີ່ມີຄວາມສ່ຽງສູງຕໍ່ໂຣກຫັດສາມາດໄດ້ຮັບວັກຊີນປ້ອງກັນໂຣກຫັດແຕ່ຕົ້ນໆ.

ຜູ້ໃດທີ່ເກີດໃນລະຫວ່າງ ປີ 1966 ຫຼື ຫຼັງຈາກນັ້ນ ແລະ ບໍ່ເຄີຍຕິດເຊື້ອໂຣກຫັດມາກ່ອນຄວນໄປພົບທ່ານໝໍເພື່ອໃຫ້ແນ່ໃຈວ່າພວກເຂົາໄດ້ສັກວັກຊີນປ້ອງກັນ ໂຣກຫັດຄົບສອງເຂັມຢ່າງໜ້ອຍເວັ້ນລະຍະຫ່າງ 4 ອາທິດ. ຖ້າຍັງບໍ່ໄດ້ຮັບວັກຊີນ ກໍສາມາດຮັບວັກຊີນໄດ້ໂດຍບໍ່ເສັຍຄ່າໃນ ຣັດ NSW.

ການສັກວັກຊີນຫຼາຍກວ່າສອງເຂັມກໍມີຄວາມປອດໄພ, ດັ່ງນັ້ນຜູ້ທີ່ບໍ່ແນ່ໃຈກໍຄວນໄປຮັບການສັກວັກຊີນ.

ໃນຣັດ NSW ສາມາດຮັບວັກຊີນໂຣກຫັດຈາກທ່ານໝໍທົ່ວໄປ ແລະ ເພສັຊກອນດ້ານສັກຢາກັນໂຣກທີ່ລົງທະບຽນ.

ເພສັຊກອນດ້ານສັກຢາກັນໂຣກບໍ່ສາມາດໃຫ້ວັກຊີນໂຣກຫັດແກ່ເດັກນ້ອຍທີ່ມີອາຍຸຕໍ່າກວ່າ 5 ປີໄດ້.

ສໍາລັບໃຜທີ່ບໍ່ມີຫຼັກຖານການສັກວັກຊີນໂຣກຫັດຄົບສອງເຂັມ (ບໍ່ໄດ້ຂໍຮັບວັກຊີນພາຍໃຕ້ NIP) ວັກຊີນຈະແມ່ນຟຣີ, ຢ່າງໃດກໍຕາມ, ເພສັຊກອນ ຫຼື ທ່ານໝໍອາດຈະຄິດຄ່າບໍລິການໃນການສັກວັກຊີນ.

ສໍາລັບຂໍ້ມູນເພີ່ມເຕີມເບິ່ງ ຄໍາຖາມທີ່ຖືກຖາມເລື້ອຍໆກ່ຽວກັບການສັກວັກຊີນປ້ອງກັນໂຣກຫັດ.

### ຫຼີກລ້ຽງການສໍາຜັດຜູ້ອື່ນຖ້າທ່ານມີອາການ

ຜູ້ທີ່ມີອາການຂອງໂຣກຫັດຄວນໂທແຈ້ງລ່ວງໜ້າໃນເວລາໄປຮັບການຮັກສາຕາມສະຖານທີ່ຮັກສາສຸຂະພາບຕ່າງໆ (ເຊັ່ນ: ພະແນກສຸກເສີນ ຫຼື ທ່ານໝໍ), ເພື່ອແຈ້ງໃຫ້ພະນັກງານຮູ້ອາການ ເພື່ອໃຫ້ພວກເຂົາສາມາດແຍກໂຕເມື່ອມາຮອດເພື່ອຈໍາກັດການແຜ່ລະບາດຂອງໂຣກຫັດໄປໃຫ້ຜູ້ອື່ນ.

ຜູ້ທີ່ເປັນໂຣກຫັດຄວນຢູ່ເຮືອນຈົນກວ່າພວກເຂົາຈະບໍ່ແຜ່ເຊື້ອອີກຕໍ່ໄປ (ເຊັ່ນ: ຈົນກວ່າຈະຜ່ານສີ່ມື້ຫຼັງຈາກຜື່ນເລີ້ມຂຶ້ນ) ເພື່ອຫຼຸດຜ່ອນຄວາມສ່ຽງທີ່ຈະແຜ່ລາມໄປຫາຜູ້ອື່ນ.

## ໂຣກຫັດໄດ້ຮັບການວິນິດໄສແນວໃດ?

ຄົນຜູ້ໜຶ່ງຈະຖືກສົງໄສວ່າເປັນໂຣກຫັດ ເມື່ອລາວຮູ້ສຶກບໍ່ສະບາຍ, ໄອ, ນ້ຳມູກໄຫຼ ຫຼື ເຈັບຕາ ແລະ ມີອາການໄຂ້ຕາມມາດ້ວຍຕຸ່ມຜື່ນ.

ເມື່ອໃດກໍຕາມທີ່ສົງໄສວ່າເປັນໂຣກຫັດ, ຄວນເກັບຕົວຢ່າງຈາກດັງ, ຄໍ, ແລະ ປັດສະວະເພື່ອຢືນຢັນການວິນິດໄສ. ອາດມີການກວດເລືອດອີກນໍາ.

ການຢືນຢັນການວິນິດໄສແມ່ນມີຄວາມສໍາຄັນຍ້ອນວ່າມັນຊ່ວຍໃຫ້ບໍລິການອະນາໄມຊຸມຊົນສາມາດຕິດຕາມດູແລຜູ້ທີ່ມີຄວາມສ່ຽງຕໍ່ການເປັນໂຣກຫັດ ໄດ້ໃນທັນທີ.

© NSW Ministry of Health. SHPN (CDB) 250443-8. March 2026

## ໂຣກຫັດປິ່ນປົວແນວໃດ?

ບໍ່ມີການປິ່ນປົວສະເພາະສຳລັບໂຣກຫັດ. ປົກກະຕິຜູ້ທີ່ເປັນໂຣກຫັດຈະຖືກແນະນຳໃຫ້ພັກຜ່ອນ, ດື່ມນ້ຳຫຼາຍໆ ແລະ ກິນຢາພາຣາເຊຕາມອລເພື່ອຫຼຸດຜ່ອນອາການໄຂ້.

ສຳລັບຫຼາຍໆຄົນ, ໂຣກອາດຈະຮ້າຍແຮງຈົນຈະຕ້ອງເຂົ້າຮັບການປິ່ນປົວຢູ່ໂຮງໝໍ.

## ການຕອບຮັບດ້ານສາທາລະນະສຸກຕໍ່ໂຣກຫັດແມ່ນຫຍັງແດ່?

ທ່ານໝໍ, ໂຮງໝໍ ແລະ ຫ້ອງທົດລອງ, ໂຮງຮຽນ, ແລະ ສູນດູແລເດັກຕ້ອງແຈ້ງກໍລະນີຂອງຜູ້ເປັນໂຣກຫັດໃຫ້ໜ່ວຍງານສາທາລະນະສຸກທ້ອງຖິ່ນຊາບ.

ພະນັກງານຂອງພະແນກບໍລິການສາທາລະນະສຸກຈະສຳພາດທ່ານໝໍແລະຄົນເຈັບ (ຫຼືຜູ້ດູແລ) ເພື່ອຊອກຫາສາເຫດຂອງການຕິດເຊື້ອ, ລະບຸຜູ້ອື່ນທີ່ມີຄວາມສ່ຽງຕໍ່ການຕິດເຊື້ອ, ປະຕິບັດມາດຕາການຄວບຄຸມ (ເຊັ່ນ: ການສັກຢາປ້ອງກັນແລະຂໍ້ຈຳກັດໃນການເຂົ້າໂຮງຮຽນຫຼືເຮັດວຽກ), ແລະ ໃຫ້ຄຳແນະນຳອື່ນໆ.

ຜູ້ທີ່ເປັນໂຣກຫັດຄວນຢູ່ເຮືອນ ແລະ ບໍ່ໄປເຮັດວຽກ, ໂຮງຮຽນ ຫຼື ສະຖານທີ່ຮັບລ້ຽງເດັກເປັນເວລາຢ່າງ ໜ້ອຍສີ່ມື້ຫຼັງຈາກຜື່ນແດງປາກົດຂຶ້ນ.

**ໂຣກຫັດ: ແບບຟອມຂໍ້ມູນສຳລັບຜູ້ສຳຜັດໂຣກຫັດ** ມີຂໍ້ມູນທີ່ເປັນປະໂຫຍດສຳລັບທ່ານໝໍເພື່ອສະໜອງໃຫ້ຜູ້ສຳຜັດໂຣກຫັດ, ການຕິດຕາມການປະເມີນ ແລະ/ຫຼື ການສະໜອງການປ້ອງກັນຫຼັງການສຳຜັດໂຣກ.

## ຂໍ້ມູນເພີ້ມເຕີມ

ເພື່ອເອົາຂໍ້ມູນເພີ້ມເຕີມ ກະລຸນາໂທຫາ ໜ່ວຍງານບໍລິການສາທາລະນະສຸກທ້ອງຖິ່ນຂອງທ່ານ ທີ່ເບີ 1300 066 055.

ຖ້າທ່ານ ຫຼື ລູກຂອງທ່ານມີອາການຂອງໂຣກຫັດ ແລະ ທ່ານມີຄວາມກັງວົນ ໃຫ້ເວົ້າລົມກັບທ່ານໝໍຂອງທ່ານທັນທີ ຫຼື ໃນກໍລະນີສຸກເສີນໃຫ້ໂທເບີ 000.  ສຳລັບຄຳແນະນຳດ້ານສຸຂະພາບ ທ່ານຍັງສາມາດໂທຫາ Healthdirect ໄດ້ທີ່ເບີ 1800 022 222 ເພື່ອຂໍຄຳແນະນຳດ້ານສຸຂະພາບຟຣີ ຕລອດ 24 ຊົ່ວໂມງ ຫຼື ໂອ້ລົມກັບເພສັຊກອນໃນທ້ອງຖິ່ນຂອງທ່ານ.